# ຝຶກອົບຮົມແບບໃກ້ຊິດ ຫົວຂໍ້: ການເຜີຍແຜ່ຂໍ້ມູນກ່ຽວກັບ ການອະນຸລັກທີ່ດິນ ແລະ ຊັບພະຍາກອນທຳມະຊາດ




## ທ່ານຈະຮຽນຮູ້ຫຍັງແດ່?

- ເນື້ອໃນກົດໝາຍທີ່ກ່ຽວກັບ ເລື່ອງທີ່ດິນ, ຊັບພະຍາກອນທຳມະຊາດ ໂດຍສະເພາະ ການມີສ່ວນຮ່ວມຂອງແຕ່ລະພາກສ່ວນໃນການປົກປັກຮັກສາທີ່ດິນ, ນ້ຳ, ປ່າໄມ້ ແລະ ການຈັດການສານເຄມີ;
- ການເຜີຍແຜ່ກົດໝາຍກ່ຽວກັບປະເດັນທີ່ມີຄວາມລະອຽດອ່ອນ ໂດຍນຳໃຊ້ວິທີການທີ່ຫຼາກຫຼາຍ, ມ່ວນຊື່ນ ເຊັ່ນ: ເກມ, ວີດີໂອ, ການສະແດງລະຄອນ, ໂປດສເຕີ ທີ່ສາມາດສອດແຊກເນື້ອໃນກົດໝາຍເຂົ້າໄປ.

## ວາລະຝຶກອົບຮົມມີຫຍັງແດ່?

ຝຶກອົບຮົມແບບໃກ້ຊິດ ໃຊ້ເວລາ 5 ວັນ:

- 3 ວັນ ຝຶກກ່ຽວກັບການເປັນຄູຝຶກ ແລະ ທິດສະດີດ້ານກົດໝາຍ;
- 1 ວັນ ສຳລັບຄູຝຶກ ແລະ ຜູ້ເຂົ້າຮ່ວມ ວາງແຜນ, ກະກຽມ ແລະ ຝຶກຊ້ອມຮ່ວມກັນ ກ່ອນລົງໄປທົດລອງຢູ່ຂັ້ນບ້ານ;
- 1 ວັນ ສຳລັບ ຝຶກທົດລອງຢູ່ຂັ້ນບ້ານ ແລະ ປະເມີນຜົນຮ່ວມກັນ.

## ວິທີການດຳເນີນງານມີແນວໃດແດ່?

- ເຕັກນິກວິທີການຮຽນຮູ້ແບບມີສ່ວນຮ່ວມ ແລະ ມີປະຕິກິລິຍາໂຕ້ຕອບ;
- ຝຶກອົບຮົມ ແມ່ນດຳເນີນໂດຍຄູຝຶກຫຼັກທີ່ໄດ້ຮັບການອົບຮົມ ແລະ ມີປະສົບການເຮັດວຽກນຳຊຸມຊົນ;
- ເຄື່ອງມືປະກອບດ້ວຍແຜນບົດສອນ ແລະ ອຸປະກອນ.

## ເນື້ອໃນຂອງຫຼັກສູດມີຫຍັງແດ່?

- ສິດ ແລະ ພັນທະຂອງພົນລະເມືອງລາວຕໍ່ກັບທີ່ດິນ;
- ພັນທະໃນການປົກປັກຮັກສາປ່າໄມ້, ພັດທະນາປ່າໄມ້ ແລະ ທີ່ດິນປ່າໄມ້;
- ການມີສ່ວນຮ່ວມຂອງແຕ່ລະພາກສ່ວນໃນການປົກປັກຮັກສາສິ່ງແວດລ້ອມ;
- ສິດ ແລະ ພັນທະຂອງຜູ້ນຳໃຊ້ສານເຄມີ;
- ວິທີການດຳເນີນການມີສ່ວນຮ່ວມໃນການປົກປັກຮັກສາສິ່ງແວດລ້ອມ;
- ພາບະບົດບາດຂອງໜ່ວຍງານປ່າໄມ້ບ້ານໃນການຄຸ້ມຄອງປ່າສະຫງວນ;
- ການປົກປັກຮັກສານ້ຳ ແລະ ການບູລະນະຟື້ນຟູ;
- ການຮັບມືກັບໄພພິບັດທາງທຳມະຊາດ.

## ສະເໜີຂໍຮັບການຝຶກອົບຮົມແບບໃກ້ຊິດໄດ້ແນວໃດ?

*ກ່ອນຝຶກອົບຮົມແບບໃກ້ຊິດ:*

- **4 ອາທິດລ່ວງໜ້າ:** ທ່ານຕ້ອງສົ່ງໜັງສືສະເໜີ ເພື່ອເຊີນໃຫ້ໂຄງການໄລຟ໌ ໄປຈັດຝຶກອົບຮົມແບບໃກ້ຊິດ ໃຫ້ແກ່ອົງກອນຂອງທ່ານ ແລະ ຄູ່ຮ່ວມງານທ້ອງຖິ່ນ;
- **3 ອາທິດລ່ວງໜ້າ**: ສົ່ງແຜນບົດຮຽນ ໃຫ້ແກ່ຄູ່ຮ່ວມງານພາກລັດ ແລະ ແບ່ງປັນຄຳຄິດເຫັນທີ່ມີ ຈາກອົງກອນຂອງທ່ານ ຫຼື ຈາກຄູ່ຮ່ວມງານທ້ອງຖິ່ນ ໃຫ້ແກ່ໂຄງການໄລຟ໌;
- **2 ອາທິດລ່ວງໜ້າ**: ສົ່ງລາຍຊື່ບ້ານເພື່ອເຮັດຝຶກອົບຮົມທົດລອງ, ສະຖານທີ່, ໄລຍະທາງ, ລວມທັງເຜົ່າ ແລະ ກຳນົດລະອຽດວ່າ ຈຳເປັນຕ້ອງມີລ່າມແປພາສາ ຫຼື ບໍ່;
- **1 ອາທິດລ່ວງໜ້າ**: ແຈ້ງໃຫ້ໂຄງການໄລຟ໌ຮູ້ ກ່ຽວກັບຈຳນວນຂອງບ້ານ ທີ່ອົງກອນຂອງທ່ານ ວາງແຜນຈະຈັດຝຶກອົບຮົມ ພາຍຫຼັງຝຶກອົບຮົມຈາກໂຄງການໄລຟ໌.

*ພາຍຫຼັງຝຶກອົບຮົມແບບໃກ້ຊິດ:*

- ແຈ້ງໃຫ້ໂຄງການໄລຟ໌ຮັບຮູ້ ກ່ຽວກັບການຝຶກອົບຮົມຂັ້ນຊຸມຊົນຂອງໜ່ວຍງານທ່ານ: ຊື່ບ້ານ, ເມືອງ, ຈຳນວນຂອງຜູ້ເຂົ້າຮ່ວມທັງໝົດ, ຈຳນວນຜູ້ເຂົ້າຮ່ວມທີ່ເປັນເພດຍິງ-ຊາຍ ແລະ ຊົນເຜົ່າ.



ອົງການບ້ານຈຸດສຸມສາກົນ, ບ້ານ ໂພນສະຫວັນໃຕ້, ຮ່ອມ 14, ເຮືອນເລກທີ 207, ເມືອງ ສີສັດຕະນາກ, ນະຄອນຫຼວງວຽງຈັນ
ຕູ້ໄປສະນີ 4697
ໂທ: +856 021 312 519, ແຟກ +856 021 315 841
Email: lifeproject@villagefocus.org